# ຂີດຄວາມສາມາດຕົ້ນຕໍ ຂອງການຝຶກອົບຮົມການເຝົ້າລະວັງພະຍາດສັດປ່າ -ພະນັກງານວິຊາການພາກສະໜາມຂອງລັດ-

ຂົງເຂດ

01

## ຄວາມຮູ້ດ້ານສຸຂະພາບສັດປ່າ

ສຳມະນາກອນ ສາມາດ:

1.1. ເຂົ້າໃຈແນວຄວາມຄິດພື້ນຖານ ແລະ ສາຍພົວພັນ ລະຫວ່າງ ສຸຂະພາບສັດປ່າ, ສຸຂະພາບຂອງສັດລ້ຽງ ແລະ ສຸຂະພາບຂອງເຂົາເຈົ້າເອງ;
1.2. ເຂົ້າໃຈຄຳວ່າ "ພະຍາດຕິດຕໍ່ຈາກສັດສູ່ຄົນ" ແລະ ເປັນຫຍັງພວກເຮົາຄວນດຳເນີນການເຝົ້າລະວັງພະຍາດຕິດຕໍ່ຈາກສັດສູ່ຄົນ ໃນສັດປ່າ;
1.3. ເຂົ້າໃຈບົດບາດຂອງເຂົາເຈົ້າເອງ ໃນວຽກງານເຝົ້າລະວັງພະຍາດສັດປ່າ;
1.4. ເຂົ້າໃຈວ່າ "ເຊື້ອພະຍາດ" ແມ່ນຫຍັງ ແລະ ຂໍ້ມູນພື້ນຖານຂອງການແຜ່ເຊື້ອພະຍາດ;
1.5. ເຂົ້າໃຈວ່າ "ບ່ອນສຳຜັດກັນ" ລະຫວ່າງ ສັດປ່າ ແລະ ຄົນ ແລະ/ຫຼື ສັດລ້ຽງ ມີຢູ່ໃສແດ່.

ຂົງເຂດ

02

## ການປະເມີນ ແລະ ວິເຄາະເຫດການ

ສຳມະນາກອນ ສາມາດ:

2.1. ຮູ້ປະເມີນ ສະພາບພື້ນທີ່ ບ່ອນພົບເຫັນການຕາຍຂອງສັດປ່າ ແລະ ກຳນົດວ່າມີຄວາມປອດໄພບໍ່ ໃນການເຂົ້າໄປໃກ້ສັດ ເພື່ອສັງເກດການ ແລະ ສືບຄົ້ນຂໍ້ມູນເພີ່ມເຕີມ;
2.2. ເກັບກຳ ແລະ ຈົດບັນທຶກຂໍ້ມູນເຫດການ ຢ່າງຖືກຕ້ອງ ກ່ຽວກັບ ສະຖານທີ່ ແລະ ສັດ.

ຂົງເຂດ

03

## ການປະຕິບັດດ້ານຄວາມປອດໄພຕໍ່ຕົນເອງ

ສຳມະນາກອນ ສາມາດ:

3.1. ເຂົ້າໃຈວ່າໃຜຄວນໃສ່ອຸປະກອນປ້ອງກັນຕົນເອງ ໃນເວລາເກັບຕົວຢ່າງສັດ;
3.2. ເຂົ້າໃຈວ່າເປັນຫຍັງ ເຂົາເຈົ້າຕ້ອງໃສ່ຜ້າອັດປາກ, ຜ້າກັນເປື້ອນ, ຖົງມື ແລະ ອຸປະກອນປ້ອງກັນຕາ ແລະ PPE ອື່ນໆ ທີ່ກຳນົດໄວ້ ໃນເວລາເຮັດວຽກງານກ່ຽວກັບພະຍາດຕິດຕໍ່ຈາກສັດສູ່ຄົນ ແລະ ການແຜ່ເຊື້ອພະຍາດ;
3.3. ໃສ່ ແລະ ຖອດອຸປະກອນປ້ອງກັນຕົນເອງ (PPE) ໃຫ້ຖືກຕ້ອງ ແລະ ຖືກຕາມລຳດັບ;
3.4. ຖິ້ມ/ກຳຈັດ ອຸປະກອນ PPE ທີ່ປົນເປື້ອນ/ເປື້ອນ ໃຫ້ເໝາະສົມ.

ຂົງເຂດ

04

## ການຈັດຕັ້ງປະຕິບັດນະໂຍບາຍ

ສຳມະນາກອນ ສາມາດ:

4.1. ລາຍງານ ເຫດການເຈັບປ່ວຍ/ຕາຍ ໃຫ້ກັບໜ່ວຍງານກ່ຽວຂ້ອງທີ່ເໝາະສົມ ຕາມສາຍລາຍງານ ໂດຍສອດຄ່ອງກັບ SOP ຂອງການເຝົ້າລະວັງພະຍາດສັດປ່າ (ຫຼື ເອກະສານນະໂຍບາຍອື່ນໆ);
4.2. ລາຍງານ ເຫດການເຈັບປ່ວຍ/ຕາຍ ທັນທີທັນໃດ ໃນກໍລະນີທີ່ຖືກກຳນົດວ່າຕ້ອງລາຍງານທັນທີທັນໃດ (ເຊັ່ນ: ພົບເຫັນມີສັດຫຼາຍກວ່າໜຶ່ງໂຕ ຕາຍຢູ່ບ່ອນດຽວກັນ).

# ຂີດຄວາມສາມາດຕົ້ນຕໍ
# ຂອງການຝຶກອົບຮົມການເຝົ້າລະວັງພະຍາດສັດປ່າ
## -ພະນັກງານວິຊາການພາກສະໜາມຂອງລັດ-

ຂົງເຂດ

**05**

### ການເກັບຕົວຢ່າງ, ການເກັບຮັກສາ ແລະ ການຂົນສົ່ງ

ສໍາມະນາກອນ ສາມາດ:

5.1. ກໍານົດວ່າ ໃນສະຖານະການໃດ ຄວນມີການເກັບຕົວຢ່າງ;
5.2. ເກັບຕົວຢ່າງທາງປາກຢ່າງຖືກຕ້ອງ ໂດຍບໍ່ໃຫ້ສະວັບ (swab) ປົນເປື້ອນ;
5.3. ເກັບຕົວຢ່າງທາງຮູທະວານ ຢ່າງຖືກຕ້ອງ ໂດຍບໍ່ໃຫ້ສະວັບ (swab) ປົນເປື້ອນ;
5.4. ເກັບຕົວຢ່າງຈາກອາຈົມ ຢ່າງຖືກຕ້ອງ;
5.5. ຕິດລະຫັດໝາຍຫຼອດຕົວຢ່າງ ທີ່ຖືກຕ້ອງ;
5.6. ບັນຈຸ/ຫຸ້ມຫໍ່ຕົວຢ່າງ ທີ່ຖືກຕ້ອງ ແລະ ປອດໄພ;
5.7. ບັນຈຸຊາກສັດ (ພ້ອມກັບແບບພິມບັນທຶກເຫດການສັດປ່າເຈັບປ່ວຍ/ຕາຍ) ໃສ່ຖົງ ຢ່າງຖືກຕ້ອງ ແລະ ປອດໄພ;
5.8. ເຂົ້າໃຈແນວຄວາມຄິດພື້ນຖານ ແລະ ຄໍາແນະນໍາ ສໍາລັບການເກັບຮັກສາຕົວຢ່າງດ້ວຍຄວາມເຢັນທີ່ຖືກຕ້ອງເໝາະສົມ

ຂົງເຂດ

**06**

### ການຜ່າຊາກສັດ

ສໍາມະນາກອນ ສາມາດ:

6.1. ປະຕິບັດຕາມ ຂັ້ນຕອນການຜ່າຊາກສັດໃຫ້ຖືກຕ້ອງ ແລະ ເປັນລະບົບ ສໍາລັບແຕ່ລະໝວດສັດ (taxa);
6.2. ໝັ້ນໃຈໃນການເກັບຕົວຢ່າງໃຫ້ຖືກຕ້ອງ ແລະ ເກັບຮັກສາໃນ ສານ/ພາຊະນະ ທີ່ເໝາະສົມ;
6.3. ໝາຍລະຫັດຕິດຫຼອດຕົວຢ່າງໃຫ້ຖືກຕ້ອງ;
6.4. ບັນທຶກຂໍ້ມູນ ການຄົ້ນພົບທີ່ໄດ້ຈາກການກວດກາໃຫ້ຖືກຕ້ອງ ແລະ ເກັບບັນທຶກດ້ວຍພາບຖ່າຍຢ່າງເໝາະສົມ;
6.5. ກໍາຈັດຊາກສັດໃຫ້ປອດໄພ ແລະ ດໍາເນີນຕາມ SOP ເຝົ້າລະວັງພະຍາດສັດປ່າ ທີ່ກ່ຽວຂ້ອງ (ຫຼື ເອກະສານນະໂຍບາຍອື່ນໆ).